ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ເຜີຍແຜ່ຄຳສັ່ງວ່າດ້ວຍການກັກ, ການຍຶດ ແລະ ການອາຍັດທຶນ



ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ຈັດຕັ້ງການເຜີຍແຜ່ຄຳສັ່ງວ່າດ້ວຍການກັກ ການຍຶດ ແລະ ອາຍັດທຶນທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ສະບັບເລກທີ 20/ນຍ, ລົງວັນທີ 26 ພະຈິກ 2020 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໃນວັນທີ 20 ມັງກອນ 2021 ຊຶ່ງດຳເນີນມາເປັນເວລາເຄິ່ງວັນ ໂດຍການເປັນປະທານຮ່ວມຂອງທ່ານ ໄຊສີ ສັນຕິວົງ ລັດຖະມົນຕີກະຊວງຍຸຕິທຳ ຫົວໜ້າສະເພາະກິດ ຮັບຜິດຊອບວຽກງານນິຕິກຳ ແລະ ກົນໄກ ແລະ ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ຫົວໜ້າຄະນະຮັບຜິດຊອບວຽກງານເຜີຍແຜ່ ແລະ ເຊື່ອມຊຶມ. ໂດຍມີຜູ້ເຂົ້າຮ່ວມຈາກບັນດາກະຊວງ/ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແລະ ປິ່ນອ້ອມໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ.

ການເຜີຍແຜ່ຄັ້ງນີ້ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕໍ່ກັບເນື້ອໃນ ແລະ ຫຼັກການທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວຮັບປະກັນໃຫ້ພາກສ່ວນກ່ຽວຂ້ອງສາມາດນຳເອົາຂໍ້ກຳນົດ ແລະ ຫຼັກການ ໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຂອງຕົນຢ່າງເປັນຮູບປະທຳ ຊຶ່ງມີທັງໝົດ 4 ເນື້ອໃນຄື: ພາບລວມ ແລະ ຄວາມຈຳເປັນ ຊຶ່ງພາຍໃຕ້ແຜນດຳເນີນງານເພື່ອກະກຽມຄວາມພ້ອມ ແລະ ສ້າງເງື່ອນໄຂຮອງຮັບໃຫ້ແກ່ການປະເມີນຮອບດ້ານຕໍ່ກັບວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ (ລະຫວ່າງປີ 2020-2021) ຈາກກຸ່ມອາຊີປາຊີຟິກ ເພື່ອຕ້ານການຟອກເງິນ; ສປປ ລາວ ມີພັນທະຕາມເງື່ອນໄຂ 40 ຂໍ້ແນະນຳໃໝ່ຂອງອົງການຕ້ານການຟອກເງິນສາກົນ ກໍ່ຄືຂໍ້ແນະນຳທີ 7 ການຕ້ານການສະໜອງທຶນໃຫ້ແກ່ການແຜ່ຂະຫຍາຍອາວຸດທຳລາຍລ້າງຜານ ແລະ ບັນຫາອື່ນໆທີ່ຕິດພັນ; ພ້ອມນັ້ນ, ກໍ່ຍັງມີການເຜີຍແຜ່ເນື້ອໃນຂອງຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 20/ນຍ, ລົງວັນທີ 26/11/2020; ພັນທະທີ່ຕ້ອງຈັດຕັ້ງປະຕິບັດ ແລະ ຄາດຄະເນແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ພ້ອມດຽວກັນນີ້, ກໍ່ເປັນການຈັດຕັ້ງປະຕິບັດແຜນວຽກໃນການກະກຽມຄວາມພ້ອມຮອງຮັບໃຫ້ແກ່ການປະເມີນການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມພັນທະສາກົນ ຂອງ ສປປ ລາວ ໃນຄັ້ງທີ 2 (ລະຫວ່າງ ປີ 2020-2021).

ທ່ານລັດຖະມົນຕີກະຊວງຍຸຕິທຳ ,ຫົວໜ້າຄະນະສະເພາະກິດ ຮັບຜິດຊອບວຽກງານນິຕິກຳ ແລະ ກົນໄກ ຍັງໄດ້ກ່າວເຖິງຜົນສຳເລັດໃນການຄົ້ນຄ້ວາຮ່າງນິຕິກຳ ແລະ ໄດ້ນຳສະເໜີຕໍ່ລັດຖະບານເຊັນຮັບຮອງ ແລະ ປະກາດໃຊ້ນິຕິກຳ 2 ສະບັບທີ່ຕິດພັນ ແລະ ທ່ານຍັງເນັ້ນໃຫ້ທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ຕ້ອງມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບຕໍ່ບັນດາເນື້ອໃນທີ່ກຳນົດໃນຄຳສັ່ງ ສະບັບເລກທີ 20/ນຍ ແລ້ວນຳໄປຈັດຕັ້ງປະຕິບັດຕົວຈິງໃນແຕ່ລະກົມກອງ ທັງນີ້ກໍ່ເພື່ອຮັບປະກັນການປະຕິບັດພັນທະສາກົນໃຫ້ສອດຄ່ອງ ແລະ ເໝາະສົມ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**